*Embassy of the United States of America*
*Vientiane, Laos*

As of July 9, 2018, the U.S. Embassy in Vientiane discontinued issuance of certain visa classes to a small number of travelers. The consular section continues to accept visa applications as normal. People who already have valid visas can still travel to the United States and will not be affected by the visa restrictions.

Specifically, the U.S. Embassy in Vientiane has discontinued issuing B1/B2, F1/F2, M1/M2, and J1/J2 visas to all Lao government officials at the Director General level and higher, and their spouses and all of their children under 21 years of age; A3 and G5 nonimmigrant visas to individuals employed by Lao government officials; C3 and C1/D nonimmigrant transit visas to Lao officials in the Ministry of Public Security and Ministry of Foreign Affairs, as well as their spouses and children under 21 years of age.

Moreover, Consular Officers in Laos will reciprocally limit the validity of A and G nonimmigrant visas issued to all Lao government officials to one entry, one-month validity where consistent with U.S. obligations or commitments under international agreements such as the UN Headquarters Agreement. Lao officials on long-term assignments to the United States may then apply for a full-validity multiple-entry visa with the Department of State once they arrive in the United States.

These visa restrictions are limited to small numbers of people. Most travelers will not be affected. People who have a valid visa are not affected by these restrictions.

Under Section 243(d) of the Immigration and Nationality Act, when so requested by the Secretary of Homeland Security due to a particular country's refusal to accept the return of its nationals, the Secretary of State must order consular officers to suspend issuing visas until informed by the Secretary of Homeland Security that the country has resumed adequate cooperation.

---

ອີງຕາມ ວັນທີ 9 ກໍລະກົດ, 2018, ສະຖານທູດອາເມລິກາ ປະຈຳນະຄອນຫລວງວຽງຈັນ, ສປປລາວ ໄດ້ຢຸດຕິການອະນຸມັດວິຊາບາງປະເພດໃຫ້ສະເພາະບຸກຄົນບາງກຸ່ມ ຜູ້ເດີນທາງເທົ່ານັ້ນ. ພະແນກກົງສູນ ຍັງສືບຕໍ່ ຮັບໃບຄຳຮ້ອງ ຂໍວິຊາ ຂອງ ບຸກຄົນທົ່ວໄປ ຕາມປົກກະຕິ. ສຳລັບບຸກຄົນໃດທີ່ມີວິຊາ ເປັນທີ່ຮຽບຮ້ອຍແລ້ວແມ່ນຍັງສາມາດເດີນທາງ ໄປ

ສະຫະລັດອາເມລິກາ ແລະ ຈະບໍ່ໄດ້ຮັບຜົນກະທົບໃດໆ ຕໍ່ມາດຕະການ ຂອງ ການຢຸດຕິການອະນຸມັດ ວີຊາໃຫມ່ທີ່ຫາກໍ່ວາງອອກ.

ໂດຍສະເພາະແລ້ວ, ສະຖານທູດ ສະຫະລັດອາມາລິກາ ປະຈຳນະຄອນຫລວງວຽງຈັນ ຈະຢຸດຕິການອະນຸມັດວີຊາສຳລັບບາງປະເພດດັ່ງຕໍ່ໄປນີ້: ວີຊາປະເພດ B1/B2 (ວີຊາ ຢ້ຽມຢາມ), F1/F2 (ວີຊາ ນັກຮຽນ), M1/M2(ວີຊານັກຮຽນວິຊາຊີບ ), ແລະ J1/J2 (ວີຊາ ນັກຮຽນແລກປ່ຽນ)ໃຫ້ແກ່ລັດຖະກອນ ໃນຕຳແຫນ່ງຫົວຫນ້າກົມຂຶ້ນໄປ, ພ້ອມທັງຄູ່ສົມລົດ ແລະ ລູກ ທີ່ມີອາຍຸຕ່ຳກວ່າ 21 ປີ. ນອກຈາກນັ້ນ, ຍັງໄດ້ຢຸດຕິການອອກວີຊາ ປະເພດ A3 ແລະ G5 ເຊິ່ງເປັນວີຊາ ຊົ່ວຄາວສຳລັບພະນັກງານທີ່ຮັບໃຊ້ສ່ວນບຸກຄົນ/ສ່ວນຕົວ ຂອງ ລັດຖະກອນ ແລະ ຢຸດຕິການອະນຸມັດວີຊາ ປະເພດ C3 ແລະ C1/D ເຊິ່ງແມ່ນວີຊາເດີນທາງຜ່ານ ໃຫ້ແກ່ ລັດຖະກອນ ສັງກັດ ກະຊວງ ປ້ອງກັນຄວາມສະຫງົບ ແລະ ກະຊວງ ການຕ່າງປະເທດ, ພ້ອມດ້ວຍຄູ່ສົມລົດ ແລະ ລູກອາຍຸຕ່ຳກວ່າ 21 ປີ. ນອກຈາກນີ້, ໃນທາງປະຕິບັດດຽວກັນ ເຈົ້າຫນ້າທີ່ກົງສູນ ປະຈຳ ສປປ ລາວ ຈະໄດ້ຈຳກັດອາຍຸ ຂອງ ວີຊາ ປະເພດ A ແລະ G ໃຫ້ແກ່ເຈົ້າຫນ້າທີ່ລາວເປັນເວລາ 1 ເດືອນ ແລະ ສາມາດເຂົ້າ-ອອກ ໄດ້ພຽງຫນຶ່ງ ຄັ້ງ ເພື່ອໃຫ້ສອດຄ່ອງກັບ ຫນ້າທີ່ ແລະ ພັນທະ ຂອງ ສະຫະລັດອາເມລິກາ ຕໍ່ກັບ ສົນທິສັນຍາສາກົນ ກໍ່ຄືສົນທິສັນຍາ ຂອງ ສຳນັກງານໃຫ່ຍ UN. ສຳລັບເຈົ້າຫນ້າທີ່ລາວ ທີ່ຖືກມອບຫມາຍໃຫ້ປະຕິວຽກ ຢູ່ ສະຫະລັດ ອາເມລິກາ ໃນໄລຍະຍາວ ຈະສາມາດ ຂໍ ວີຊາ ເຂົ້າ-ອອກ ຫລາຍຄັ້ງ ກັບ ກະຊວງການຕ່າງປະເທດ ຂອງ ສະຫະລັດອາເມລິກາ ໃນເວລາທີ່ຜູ້ກ່ຽວເດີນທາງເຖິງ ສະຫະລັດອາເມລິກາ.

ຂໍ້ກຳນົດການຢຸດຕິອະນຸມັດວີຊາເຫລົ່ານີ້ ແມ່ນ ສະເພາະແຕ່ກຸ່ມຄົນຈຳນວນຫນ້ອຍເທົ່ານັ້ນຜູ້ເດີນທາງສ່ວນໃຫ່ຍ ຈະບໍ່ໄດ້ຮັບຜົນກະທົບແຕ່ຢ່າງໃດ. ບຸກຄົນທີ່ມີວີຊາທີ່ຍັງມີອາຍຸການໃຊ້ງານຢູ່ ຈະບໍ່ມີຜົນກະທົບໃດໆ ຈາກມາດຕະການດັ່ງກ່າວນີ້ເຊັ່ນກັນ.

ອີງຕາມມາດຕາ 243 (d) ໃນການປະຕິບັດກົດໝາຍ ກວດຄົນເຂົ້າເມືອງ ແລະ ສັນຊາດ, ການຮຽກຮ້ອງຈາກລັດຖະມົນຕີ ກະຊວງຄຸ້ມຄອງພົນລະເມືອງ ຂອງ ສະຫະລັດອາເມລິກາ ເພາະເນື່ອງຈາກການປະຕິເສດ ໃນການຮັບເອົາພົນລະເມືອງຂອງຕົນ ກັບຄືນສູ່ປະເທດ, ໃຫ້ລັດຖະມົນຕີ ກະຊວງການຕ່າງປະເທດ ຂອງ ສະຫະລັດອາເມລິກາ ຕ້ອງອອກຄຳສັ່ງ ເຖິງເຈົ້າຫນ້າທີ່ກົງສູນ ຂອງ ສະຫະລັດອາເມລິກາ ໃຫ້ຢຸດຕິການອະນຸມັດວີຊາ ຈົນກວ່າ ຈະໄດ້ຮັບການແຈ້ງການໃຫມ່ຈາກລັດຖະມົນຕີກະຊວງຄູ້ມຄອງ ພົນລະເມືອງ ຂອງ ສະຫະລັດອາເມລິກາ ວ່າ ປະເທດນັ້ນໄດ້ສືບຕໍ່ໃຫ້ການຮ່ວມມືຢ່າງເຫມາະສົມ.